ຂ່າວ NEWS
BOL–LPB
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ
Tel: 071 260700 Fax: 071 260718
Website: https://www.bol.gov.la/luangprabang

# ເຜີຍແຜ່ນິຕິກຳທີ່ກ່ຽວຂ້ອງກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ




ສຳນັກງານຂໍ້ມູນຕ້ານການຟອກເງິນ ຮ່ວມກັບ ສະຖາບັນຊ່ວຍເຫຼືອດ້ານກົດໝາຍ ແລະວິຊາການ (Institute for Legal Support and Technical Assistance “ILSTA”) ໄດ້ຈັດກອງປະຊຸມສຳມະນາ ກ່ຽວກັບການປະຕິບັດພັນທະ ດ້ານວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (Anti--Money Laundering and Counter-Financing of Terrorism “ວຽກງານ AML/CFT”) ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຢູ່ຂັ້ນທ້ອງຖິ່ນ (ທະນາຄານທຸລະກິດ, ບໍລິສັດເຊົ່າສິນເຊື່ອ ແລະໂຮງຊວດຈຳ) ຂຶ້ນໃນວັນທີ 16-17 ສິງຫາ 2022 ທີ່ ຫ້ອງປະຊຸມ ທະນາຄານ ແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ໃຫ້ກຽດເປັນປະທານໂດຍ ທ່ານ ຈິນດາໄມ ວິໄລທັງສ໌ ວ່າການຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ, ມີທ່ານ ນາງ ພຸດດາວັນ ສິຣິສິມບັດ ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຫຼວງພະບາງ ແລະ ທ່ານ Mike Brocklehurst, ຜູ້ຕາງໜ້າຈາກສະຖາບັນຊ່ວຍເຫຼືອດ້ານກົດ

ໝາຍ ແລະວິຊາການ( ILSTA) ແລະທະນາຄານທຸລະກິດ. ບໍລິສັດເຊົ່າສິນເຊື່ອ ແລະໂຮງຊວດຈຳ ແຂວງຊຽງຂວາງ, ໄຊຍະບູລີ ແລະແຂວງຫຼວງພະບາງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມສຳມະນາ ເພື່ອເຜີຍແຜ່ນິຕິກຳທີ່ກ່ຽວຂ້ອງກັບ ການຈັດຕັ້ງປະຕິບັດພັນທະດ້ານວຽກງານ AML/CFT ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ຮັບການປັບປຸງໃໝ່ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍມາດຕະການຕ້ານ ສະກັດກັ້ນ ການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບຫົວໜ່ວຍທີ່ມີໜ້າທີ່ລາຍງານ (ສະບັບປັບປຸງ) ເລກທີ 10/ຄຕຟງ, ລົງວັນທີ 25 ສິງຫາ 2021 ແລະ ຄຳສັ່ງວ່າດ້ວຍ ການກັກ, ການຍຶດ ແລະ ການອາຍັດ ທຶນ ທີ່ກ່ຽວຂ້ອງກັບການສະໜອງທຶນໃຫ້ແກ່ການແຜ່ຜາຍອາວຸດທຳລາຍລ້າງຜານ ສະບັບເລກທີ 20/ນຍ ລົງວັນທີ 26 ພະຈິກ 2020. ນອກຈາກນີ້, ກໍ່ໄດ້ນຳສະເໜີກ່ຽວກັບສະພາບລວມຂອງການກະກຽມການປະເມີນຜົນ ຮອບທີ2 ຂອງ ສປປ ລາວ ແລະທົບທວນຄວາມເຂົ້າໃຈຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນການຈັດຕັ້ງປະຕິບັດສິດ ແລະພັນທະດ້ານວຽກງານ AML/CFT ໂດຍໄດ້ເໜັ້ນໜັກ ການລາຍງານທຸລະກຳທີ່ສົງໃສວ່າເປັນການຟອກເງິນ ແລະສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະການນຳໃຊ້ມາດຕະການ ການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ທັງນີ້, ກໍ່ເພື່ອແນໃສ່ການສ້າງຂີດຄວາມສາມາດໃຫ້ແກ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນຂັ້ນທ້ອງຖິ່ນ ໃຫ້ມີຄວາມເຂົ້າໃຈເລິກເຊິ່ງກ່ຽວກັບວຽກງານດັ່ງກ່າວ ແລະເພື່ອກະກຽມຄວາມພ້ອມຮອບດ້ານຮອງຮັບໃຫ້ແກ່ການປະເມີນຜົນຮອບດ້ານວຽກງານ AML/CFT ຂອງ ສປປ ລາວ ໃນປີ 2022.







ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ